**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ອຸດົມໄຊ
ພະແນກ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ.01../ພຕສ
ອຸດົມໄຊ, ວັນທີ.03..ມັງກອນ 2024

# ແຈ້ງການ

**ເຖິງ**: ຜູ້ປະກອບການ ທີ່ດຳເນີນທຸລະກິດ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ພາຍໃນແຂວງ.
**ເລື່ອງ**: ອອກ ຫຼື ຕໍ່ໃບອະນຸຍາດ ດຳເນີນທຸລະກິດ ດ້ານເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ ປະຈຳປີ 2024.

- ອີງຕາມ ກົດໝາຍ ວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 7 ພະຈິກ 2016.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ແຂວງອຸດົມໄຊ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງ ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022;

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ຂໍຖືເປັນກຽດແຈ້ງມາຍັງ ທ່ານຜູ້ປະກອບການ ທີ່ດຳເນີນທຸລະກິດ ດ້ານເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ ພາຍໃນແຂວງອຸດົມໄຊ **ໃຫ້ເຂົ້າມາອອກ ຫຼື ຕໍ່ໃບອະນຸຍາດ ປະຈຳປີ 2024 ນັບແຕ່ມື້ອອກແຈ້ງການເປັນຕົ້ນໄປ ຈົນເຖິງວັນທີ 31 ມັງກອນ 2024, ເນື່ອງຈາກວ່າໃບອະນຸຍາດ ປະຈຳປີ 2023 ແມ່ນໄດ້ໝົດກຳນົດ ໃນວັນທີ 31 ທັນວາ 2023 ນີ້ແລ້ວ**. ຖ້າຫາກທ່ານໃດບໍ່ເຂົ້າມາອອກ ຫຼື ຕໍ່ໃບອະນຸຍາດການດຳເນີນທຸລະກິດດັ່ງກ່າວ ຕາມວັນເວລາທີ່ກຳນົດໄວ້, ທາງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ຈະໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຕໍ່ຜູ້ລະເມີດຢ່າງເຂັ້ມງວດ.

ການຍື່ນເອກະສານ ເພື່ອຂໍຕໍ່ໃບອະນຸຍາດ ແມ່ນສາມາດດຳເນີນການໄດ້ດ້ວຍວິທີການໃດໜຶ່ງ ດັ່ງລຸ່ມນີ້:

1. ເຂົ້າໄປພົວພັນປະກອບເອກະສານ ແບບຟອມ ເພື່ອຍື່ນຂໍອອກ ຫຼື ຕໍ່ໃບອະນຸຍາດ ຢູ່ທີ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ຂະແໜງເຕັກໂນໂລຊີ ແລະ ນະວັດຕະກຳ ໃນໂມງລັດຖະການ.
2. ທ່ານສາມາດຍື່ນເອກະສານ ແບບຟອມ ເພື່ອຂໍອອກ ຫຼື ຕໍ່ໃບອະນຸຍາດ ຜ່ານລະບົບອອນລາຍ ໂດຍເຂົ້າໄປທີ່ ເວັບໄຊ **www.db.dtc-odx.gov.la** ແລະ ດາວໂຫຼດເອົາເອກະສານ ແບບຟອມ ເພື່ອປະກອບຂໍ້ມູນໃຫ້ຄົບຖ້ວນ, ຈາກນັ້ນ ໃຫ້ສະໝັກເຂົ້ານຳໃຊ້ລະບົບ ແລະ ລອັກອິນເຂົ້າລະບົບ ເພື່ອປະກອບຂໍ້ມູນແບບຟອມອອນລາຍ ແລະ ອັບໂຫຼດເອກະສານທີ່ກ່ຽວຂ້ອງເຂົ້າລະບົບ, ຫຼັງຈາກນັ້ນ ໃຫ້ລໍຖ້າເອກະສານໄດ້ຮັບການອະນຸມັດແລ້ວ ທ່ານສາມາດດາວໂຫຼດເອົາໃບອະນຸຍາດແບບເອເລັກໂຕຣນິກ ຫຼື ສາມາດເຂົ້າໄປພົວພັນເອົາໃບອະນຸຍາດ ຢູ່ທີ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ ຂະແໜງເຕັກໂນໂລຊີ ແລະ



ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ
ສະຖານທີ່: ບ້ານດອນໄຊ, ເມືອງໄຊ, ແຂວງອຸດົມໄຊ, ໂທລະສັບ: 081 312508, ອີເມວ: dpt-odx@ou.gov.la, ເວັບໄຊ: http://dtc-odx.gov.la

ນະວັດຕະກໍາ. ລາຍລະອຽດໃນການນໍາໃຊ້ລະບົບ ສາມາດຕິດຕໍ່ພົວພັນຫາ ເບີໂທລະສັບ: 020 5651 8988 ແລະ 020 58566836 ໃນໂມງລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າພະແນກ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ພະແນກ
ເຕັກໂນໂລຊີ ແລະ
ການສື່ສານ
ແຂວງອຸດົມໄຊ

ນ. ປິ່ນຄໍາ ອຸ່ນລະຄອນ

ເອກະສານຂໍຕໍ່ໃບອະນຸຍາດປະກອບມີ:

1. ໃບຄໍາຮ້ອງ
2. ໃບອະນຸຍາດສະບັບເກົ່າ (ຕົ້ນສະບັບ)
3. ໃບມອບສິດ (ຜູ້ຕາງໜ້າ)
4. ໃບທະບຽນວິສາຫະກິດ (ຖ້າມີການປ່ຽນແປງ)
5. ໃບຢັ້ງຢືນການເສຍອາກອນ
6. ບົດສະຫຼຸບການເຄື່ອນໄຫວດໍາເນີນທຸລະກິດຜ່ານມາ
7. ບົດສະຫຼຸບດ້ານການເງິນ

ຜູ້ປະສານງານ:

1. 020 58566836 ທ. ຈູ ເຊັງ ວິຊາການ ຂະແໜງເຕັກໂນໂລຊີ ແລະ ນະວັດຕະກໍາ

ສະແກນເພື່ອດາວໂຫລດແບບຟອມ



ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ
ສະຖານທີ່: ບ້ານດອນໄຊ, ເມືອງໄຊ, ແຂວງອຸດົມໄຊ. ໂທລະສັບ: 081 312508, ອີເມລ໌: dpt-odx@ou.gov.la, ເວັບໄຊ: http://dtc-odx.gov.la